# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ 29 ສິງຫາ 2010 (29-8-2010)**

---

## ປະເຊີນກັບພັຍວິບັດດ້ວຍຄວາມກ້າຫານ

**ຂໍ້ພຣະຄັມພີໃນບົດຮຽນນີ້:** 2 ຊາມູເອນ 15:13-14, 24-26, 30-37; 19:7-8

**ຄໍາຖາມຊີວິດ:** ບົດຮຽນນີ້ຈະຊ່ອຍໃຫ້ທ່ານເດີນຜ່ານກັບພັຍວິບັດໄດ້ ຢ່າງຜູ້ມີຊັຍໃນຊີວິດຂອງທ່ານ.

**ພຣະຄັມພີແຫ່ງຄວາມຈິງ:** ບົດຮຽນນີ້ເວົ້າເຣື່ອງການຄວບຄຸມພັຍວິບັດທີ່ເຂົ້າມາທໍາລາຍຊີວິດປະຈໍາວັນຂອງທ່ານ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ເປັນບົດຮຽນອັນສໍາຄັນໃນຊີວິດ ເພາະທຸກໆ ຄົນຈະປະເຊີນກັບພັຍວິບັດ ເຊັ່ນ: ການຕາຍໃນຄອບຄົວ, ບັນຫາພາຍໃນ, ບັນຫາທີ່ບ່ອນເຮັດວຽກ, ຫລືສະພາບລໍາບາກອື່ນໆ. ໂດຍການສໍາຣວດກວດເບິ່ງຊີວິດຂອງກະສັດດາວິດຊຶ່ງເພິ່ນໄດ້ປະເຊີນກັບພັຍວິບັດຢ່າງໂຫດຮ້າຍ ໃນເມື່ອພັຍວິບັດໄດ້ເຂົ້າມາສູ່ຊີວິດເຮົາ ພວກເຮົາສາມາດເອົາຕົວຢ່າງຂອງເພິ່ນມາປະກອບໃຊ້ວ່າເພິ່ນໄດ້ເຮັດຢ່າງໃດຈຶ່ງເອົາຊະນະໄດ້.

ໃນປີ 2005 ມີລົມພະຍຸໃຫຍ່ ຄາຕີນາ ໄດ້ເຂົ້າມາທໍາລາຍບ້ານເຮືອນໃກ້ທະເລໃນ**ຣັດອາ**ລາບາມາ. ມີສອງຜົວເມັຽບໍ່ຍອມໜີເພາະຕົວເອງເຄີຍພົບເຫັນວ່ານໍ້າບໍ່ເຄີຍລົ້ນຝັ່ງໄປຖ້ວມເຮືອນລາວຈັກເທື່ອ. ໃນທີ່ສຸດໃນເມື່ອນໍ້າໄຫລມາຢ່າງແຮງເຖິງພະນັກເຮືອນ ລາວແລະພັລຍາໄດ້ລອຍໄປຫາເຮືອນຂອງເພື່ອບ້ານໃກ້ຄຽງ ທີ່ປຸກໃສ່ບ່ອນສູງແລະໃຊ້ເສົາເຫລັກໃຫຍ່. ພວກເຂົາໄດ້ມີຄວາມກ້າຫານປະເຊີນກັບພັຍວິບັດໂດຍການອ້ອນວອນ **ແລະທ່ອງ**ຂໍ້ພຣະຄັມພີເພື່ອໜູນໃຈຕົວເອງ.

ໃນເມື່ອບັນຫາເຂົ້າມາໃນຊີວິດທາງດ້ານສຸຂພາບ, ຄວາມແຕກແຍກໃນຄອບຄົວ, ບັນຫາໃນບ່ອນເຮັດວຽກ, ບັນຫາດ້ານເສຖກິດ ແລະອື່ນໆນັ້ນອາດເຮັດໃຫ້ພວກເຮົາມີຄວາມຢ້ານເກີດຂຶ້ນແລະເຮັດໃຫ້ພວກເຮົາບໍ່ສາມາດມອງເຫັນອັນໃດໄດ້ເໝືອນດັ່ງເຮົາເຄີຍໄດ້ຍິນວ່າ "ມືດແປດດ້ານ". ຢ່າງໃດກໍຕາມ ໃນເມື່ອເປັນເຊັ່ນນີ້ຢ່າລືມເອົາຕົວຢ່າງຂອງກະສັດດາວິດມາໃຊ້ວ່າເພິ່ນເຮັດຢ່າງໃດຈຶ່ງສາມາດເອົາຊະນະບັນຫານັ້ນໄດ້.

### 1. ໄວ້ວາງໃຈໃນພຣະເຈົ້າເລື້ອຍໄປ: (2 ຊາມູເອນ 15:13-14, 24-26)

ກະສັດດາວິດໄດ້ເຮັດຄວາມຜິດບາບກັບນາງ ບັດຊີບາ ແລະ ຂ້າອູຣີອາຜູ້ເປັນສາມີຂອງນາງ, ພຣະເຈົ້າໄດ້ກ່າວວ່າຄົມດາບຈະບໍ່ຂາດຈາກຄອບຄົວຂອງກະສັດດາວິດຈັກເທື່ອ. (2 ຊາມູເອນ 12:11-12). ກະສັດດາວິດໄດ້ເຫັນບາບຕາມສນອງກັບຕາໃນເມື່ອລູກຊາຍ ອໍາໂນນໄດ້ຂົ່ມຂືນຜູ້ເປັນນ້ອງສາວຄົນລະແມ່ (2 ຊາມູເອນ 13:1-20). ຕໍ່ມາລູກຊາຍອີກຄົນນຶ່ງຜູ້ຊື່ວ່າ ອັບຊາໂລມໄດ້ຄຽດທີ່ນ້ອງສາວຖືກຂົ່ມຂືນເລີຍໄປຂ້າ ອໍາໂນນ (2 ຊາມູເອນ 13:21-39). ຕໍ່ມາ ອັບຊາໂລມກໍກະບົດຕໍ່ກະສັດດາວິດອີກເພື່ອຍາດເອົາບັນລັງ.

**ມີຜູ້ບອກຂ່າວ**ຕໍ່ກະສັດດາວິດວ່າ **ຈິດໃຈຂອງປະຊາຊົນອິສຣາເອນທັງໝົດເປັນໃຈກັບ ອັບຊາໂລມ.** ກະສັດດາວິດບໍ່ຮູ້ເລີຍວ່າລູກຊາຍໄດ້ມີແຜນຄົ້ນລົ້ມຕົນເອງ ແລະປະຊາຊົນໄດ້ເປັນໃຈກັບອັບຊາໂລມ. ເວລານັ້ນເພິ່ນໄດ້ປະຊົນກັບພັຍວິບັດອັນໃຫຍ່ໃນຊີວິດ. ເພິ່ນຈະເຮັດແນວໃດກັບບັນຫານັ້ນໃຫ້ສຶກສາຕໍ່ໄປ?

ເພິ່ນໄດ້ສັ່ງໃຫ້ທະຫານໜີໄປບໍ່ໃຫ້ປະທະກັນ. ເວລາກະສັດດາວິດໜີໄປນັ້ນພວກຜູ້ນໍາສາສນາໄດ້ມາພົບເພິ່ນເຊັ່ນ: **ຊາດອກ, ອາບີອາທາ ແລະພວກເລວີຄົນອື່ນໆ** ພວກເຂົານໍາເອົາ**ຫີບຄໍາພຣະສັນຍາ**ມານໍາ. ພວກຫົວໜ້າປະໂຣຫິດ

ນຳຫີບພຣະສັນຍາມາເພື່ອເປັນເຄື່ອງໝາຍວ່າພຣະເຈົ້າຍັງສະຖິດຢູ່ນຳດາວິດຢູ່. ແຕ່ເຫັນວ່າດາວິດໄດ້ສັ່ງໃຫ້ພວກເຂົາເອົາຫີບພຣະສັນຍານັ້ນກັບຄືນໄປໄວ້ໃນ**ກຸງເຢຣູຊາເລັມ.** ດາວິດໄດ້ຍອມຕໍ່ພຣະເຈົ້າ: ເພິ່ນໄດ້ໄວ້ວາງໃຈແລະຫວັງວ່າວັນນຶ່ງພຣະເຈົ້າຊ່ອຍເພິ່ນໃຫ້ໄດ້ກັບໄປຢູ່ກຸງເຢຣູຊາເລັມອີກທັງໆທີ່ລູຊາຍ ອັບຊາໂລມຜູ້ປອງຮ້າຍຍາດເອົາບັງລັງກໍຕາມ. ເພິ່ນເຊື່ອໝັ້ນວ່າພຣະເຈົ້າຈະນຳເພິ່ນກັບຄືນບ້ານເດີມອີກ.

| |
|---|
| ແທນທີ່ຈະຖິ້ມໂທດໃຫ້ພຣະເຈົ້າເພາະຕົນເອງໄດ້ຮັບເຄາະຮ້າຍ ກະສັດດາວິດໄດ້ສືບຕໍ່ກັບຄວາມວາງໃຈໃນພຣະເຈົ້າ. ພວກເຮົາໄດ້ຫຍັງແດ່ໃນເມື່ອຖິ້ມໂທດໃສ່ພຣະເຈົ້າ? ໃນກໍຣະນີນີ້ພຣະເຈົ້າເອງເປັນຜູ້ເອົາກະສັດດາວິດໜີອອກໄປ ແຕ່ບໍ່ແມ່ນເພິ່ນໄດ້ໜີຈາກບັນຫາ. ແຕ່ດາວິດໄດ້ໄວ້ວາງໃຈ ແລະມີຈິດໃຈຢາກເດີນໄປກັບພຣະເຈົ້າ ເພື່ອໃຫ້ພຣະເຈົ້ານຳພາໃນການກະທຳທຸກຢ່າງ. |

## 2. <u>ຢ່າແຍກຕົນເອງອອກຢູ່ຄົນດຽວ</u>: (2 ຊາມູເອນ 15:30-37)

ກະສັດດາວິດໄດ້ຮຽນບົດຮຽນດີຈາກການແລ່ນໜີໄປວ່າ ເພິ່ນຕ້ອງອາສັຍຄົນອື່ນຊ່ອຍເຊັ່ນກັນ. ເພິ່ນອາດມີຄວາມຮູ້ສຶກໂດດດ່ຽວໃນເມື່ອພວກປະໂຣຫິດໄດ້ຫາມຫີບພຣະສັນຍາກັບຄືນໄປກຸ່ງເຢຣູຊາເລັມ. ເພິ່ນໄດ້ຂຶ້ນໄປເທິງພູໝາກກອກເທດເອົາ**ຜ້າປົກຫົວ**ແລະ**ຍ່າງຕີນເປົ່າ**ແນມເບິ່ງກຸ່ງເຢຣູຊາເລັມ. ການກະທຳເຊັ່ນນີ້ເປັນຍ້ອນຄວາມທຸກໂສກແລະເສົ້າໃຈຫລາຍ.

ກະສັດດາວິດໄດ້ຮັບຂ່າວຮ້າຍໃນເມື່ອຮູ້ວ່າຜູ້ປຶກສາໃຫ້ຄຳປຶກສາໃກ້**ຊິດ**ຊື່ວ່າ ອາຣີໂຕເຟນໄດ້ຮ່ວມມືກັບອັບຊາໂລບ. ກະສັດດາວິດໄດ້ອ້ອນວອນຕໍ່ພຣະເຈົ້າໃຫ້ຄົນນັ້ນເປັນຄົນ**ໂງ່ຈ້າ.** ພຣະເຈົ້າບໍ່ໄດ້ປະໃຫ້ດາວິດຢູ່ຕາມລຳພັງແຕ່ຄົນດຽວ. ພຣະອົງໄດ້ສົ່ງຊາຍຄົນນຶ່ງນຸ່ງເຄື່ອງຂາດແລະມີຂີ້ເຖົ່າເຕັມຫົວມາຫາດາວິດເພື່ອຈະໃຫ້ຄຳໜູນໃຈຊື່ວ່າຮູຊາຍ. ຄົນນັ້ນອາດເປັນຄົນແກ່ ມີບາດແຜເຕັມຕົວໄດ້ເດີນເຂົ້າໃກ້ດາວິດ ຜູ້ນັ້ນອາດເປັນຄົນນຳ**ເອົາພາ**ຣະມາສູ່ດາວິດແລະພັກພວກ. ດັ່ງນັ້ນ, ດາວິດໄດ້ສົ່ງຄົນນັ້ນຄືນໄປເປັນນັກສືບໃນກຸງເຢຣູຊາເລັມໂດຍສະເພາະໃນສານຕັດສິນຂອງອັບຊາໂລມ ໃນເມື່ອເຫັນການກະທຳຂອງອັບຊາໂລມຢ່າງໃດແລ້ວໃຫ້ລາຍງານຕໍ່ກະສັດດາວິດດ່ວນ.

ອາຣີໂຕເຟນໄດ້ໃຫ້ຄຳແນະນຳອັບຊາໂລມວ່າໃຫ້ນຳເອົາທະຫານ 12,000 ອອກໄປເຈັບກະສັດດາວິດໃນເມື່ອເພິ່ນຢູ່ໃນສະພາຍອ່ອນແອຢູ່ນີ້ ແຕ່**ອັບຊາ**ໂລມຍັງໄປປຶກສາຮູຊາຍອີກເພື່ອຢາກຮູ້ຄຳປຶກສາທີ່ດີ ແຕ່ເຫັນວ່າຮູຊາຍບໍ່ເຫັນດີກັບການອອກໄປໂຈມຕີ. ອາຣີໂຕເຟນຄຽດເພາະອັບຊາໂລມບໍ່ເອົາຄຳແນະນຳຂອງຕົນຈຶ່ງຂ້າຕົນເອງຕາຍ (2 ຊາມູເອນ 17:23). ຫລັງຈາກອາຣີໂຕເຟນຕາຍແລ້ວ ຮູຊາຍກໍກາຍເປັນຜູ້ສຳຄັນຂຶ້ນໃນກຸ່ມຂອງ**ອັບຊາ**ໂລມ.

| |
|---|
| ໃນເມື່ອພວກເຮົາປະເຊີນກັບພັຍວິບັດ, ພວກເຮົາບໍ່ຄວນປະເຊີນກັບມັນຄົນດຽວ. ໃນເມື່ອພວກເຮົາແຍກຕົວເອງຢູ່ຄົນດຽວ ພວກເຮົາກໍຂາດຜູ້ໃຫ້**ຄຳປຶກ**ສາແນະນຳໃຫ້ມີຄວາມຄຶດດີແລກະທຳຢ່າງຖືກຕ້ອງ. ໃຫ້ພວກເຮົາຊອກເອົາຜູ້ເຊື່ອແລະຮັກພຣະເຈົ້າເປັນຄົນໃຫ້ຄຳປຶກສາໃນຍາມທຸກຍາກເພື່ອຈະເອົາຊະນະຕໍ່ບັນຫາໄດ້. |

## 3. <u>ເຮັດໃຫ້ຄວາມຮັບຜິດຊອບຂອງທ່ານສຳເຣັດ</u>: (2 ຊາມູເອນ 19:7-8)

ທະຫານຂອງກະສັດດາວິດບຸກໂຈມຕີທະຫານຂອງອັບຊາໂລມແລະກໍໄດ້ຮັບຊັຍຊະນະ (2 ຊາມູເອນ 18:18). ທະຫານ 20,000 ຄົນຂອງອັບຊາໂລມໄດ້ຕາຍໃນສນາມຮົບພ້ອມດ້ວຍອັບຊາໂລມ. ການຕາຍຂອງອັບຊາໂລມນັ້ນເປັນເຄາະຮ້າຍເພາະກະສັດດາວິດສັ່ງບໍ່ໃຫ້ຂ້າ (2 ຊາມູເອນ 18:12) ໃນເວລາສົງຄາມອັບຊາໂລມໄດ້ຂີ່ອິດມ້າໄປສນາມຮົບແລະຜົມຍາວຂອງລາວໄດ້ເກາະງ່າໄມ້. ເຣື່ອງນີ້ແມ່ນທະຫານຄົນນຶ່ງຂອງດາວິດໄດ້ເຫັນ ແລະກໍໄປລາຍ

ງານໃຫ້ນາຍທະຫານຮູ້. ໂຢອາບຜູ້ເປັນນາຍຈຶ່ງໃຈຮ້າຍທີ່ທະຫານຜູ້ເປັນລູກນ້ອງບໍ່ຂ້າລາວ ເພິ່ນຈຶ່ງຂີ່ຣົດມ້າອອກໄປ ແລະເອົາຫອກແທງອັບຊາໂລມໃສ່ຫົວໃຈສາມບາດ.

ໃຫ້ເອົາຕົວເອງຢູ່ໃນຖ້າມກາງຄົນແຂ້ມແຂງ ຄົນເຊື່ອ ແລະຮັກພຣະເຈົ້າເພື່ອພວກເຂົາເຈົ້າຈະຊ່ວຍເຮົາໃນຍາມລໍາບາກໄດ້.

ເຫດການນີ້ໄດ້ເຮັດໃຫ້ກະສັດດາວິດມີຄວາມໂສກເສົ້າຂຶ້ນເພາະເພິ່ນທາກໍາເສັຽລູກຊາຍທີ່ມີກັບນາງ ບັດຊີບາ (2 ຊາມູເອນ 12:15-23). ອໍາໂນນຖືກຂ້າ (2 ຊາມູເອນ 13:21-19). ໃນເວລານີ້ເພິ່ນໄດ້ໂສກເສົ້າເພາະໄດ້ສິ່ງສະການເປັນຄັ້ງທີສາມ. ເຖິງແມ່ນອັບຊາໂລມໄດ້ມີຈິດໃຈຊົ່ວຕໍ່ກະສັດດາວິດເທົ່າໃດກໍຕາມ ເພິ່ນກໍຍັງຮັກລູກຊາຍຄົນນີ້ສເມີ. ພວກທະຫານໄດ້ຂ້າຜູ້ເປັນສັດຕຣູ ແຕ່ບັດນີ້ກະສັດາວິດໄດ້ຮ້ອງໄຫ້ຢ່າງເປີຍເຜີຍ ເພາະສັດຕຣູໄດ້ຕາຍໄປ. ນາຍທະຫານໂຢອາບໄດ້ມີຄໍາຖາມຕໍ່ກະສັດດາວິດວ່າເພິ່ນມີຄວາມສັດຊື່ຕໍ່ພວກທະຫານຢ່າງໃດ ເພາະເພິ່ນບໍ່ໄດ້ເຮັດໜ້າທີ່ຂອງຕົນເໝືອນເປັນກະສັດ. ພວກທະຫານຢ້ານເພາະພວກເຂົາຄືວ່າກະສັດດາວິດຄຶງຄຽດແລະຢາກຂ້າພວກເຂົາຄືນເພາະລູກຊາຍຜູ້ເປັນສັດຕຣູໄດ້ຖືກຂ້າ (2 ຊາມູເອນ 19:6). ໂຢອາບ**ໜູນໃຈ**ໃຫ້ດາວິດວ່າ **ຈົ່ງລຸກຂຶ້ນ** ແລະໄປໜູນໃຈພວກທະຫານ ຜູ້ຕໍ່ສູ້ເພື່ອຕົນເອງ.

ກະສັດດາວິດມີຄວາມຮັບຜິດຊອບຕໍ່ການທໍາລາຍສັດຕຣູຂອງຕົນເອງເຖິງຈະແມ່ນລູກຊາຍກໍຕາມ. ແຜ່ນດິນຕ້ອງການຄວາມແຂ້ມແຂງໃນເວລານີ້ ບໍ່ແມ່ນຄວາມອ່ອນແອ. ໂຢອາບເຕືອນກະສັດດາວິດວ່າ ຖ້າພວກທະຫານເຫລົ່ານີ້ໂຕນໜີໄປໝົດ ເພິ່ນອາດຈະມີຄວາມເສັຽໃຈຫລາຍກວ່າບັນຫານໃດໆທີ່ໄດ້ປະເຊີນມາ.

ພວກເຮົາບໍ່ຄວນເອົາການສູນເສັຽສ່ວນຕົວໃຫ້ເປັນບັນຫາບໍ່ໃຫ້ເຮັດໜ້າທີ່ຄວາມຮັບຜິດຊອບຈາກພຣະເຈົ້າ. ພຣະເຈົ້າເປັນຜູ້ເລືອກແລະເຈີມດາວິດໃຫ້ເປັນກະສັດ. ພຣະອົງເປັນຜູ້ນໍາພາໃນຊີວິດບໍ່ວ່າຈະຂຶ້ນສູງຫລືລົງຕໍ່າ. ດາວິດຄົງໄດ້ຍອມສະລະສິດພິເສດສ່ວນຕົວເພື່ອປະເທດຊາດໃນເມື່ອປະເຊີນກັບການກະບົດຂອງອັບຊາໂລມ.

.

**ປະຕູເມືອງ**

ປະຕູແມ່ນບ່ອນເຂົ້າອອກ ຄ້າຂາຍຢ່າງເປັນທາງການ. ກະສັດໄດ້ກະທໍາພາຣະກິດຢ່າງຖືກຕ້ອງຕາມກົດໝາຍໃນທີ່ນັ້ນ. ມັນເປັນບ່ອນເຂົ້າອອກ ແລະກະສັດເອງເປັນຜູ້ສັ່ງການໃຫ້ຄົນອອກເຂົ້າໄດ້. ໃນກໍຣະນີນີ້ໝາຍເຖິງສະພາບປົກກະຕິຂອງບ້ານເມືອງ. ຫລັງຈາກການສູ້ຮົບ ແລະອັບຊາໂລມຕາຍໄປ ກະສັດດາວິດໄດ້ກັບຄືນໄປສູ່ການປົກຄອງຕາມປົກກະຕິແລ້ວ.

ກະສັດດາວິດ ໄດ້**ລຸກຂຶ້ນ** ແລະກັບໄປຍັງ**ປະຕູ**ເມືອງ. ເພິ່ນໄດ້ກັບຄືນເຂົ້າສູ່ການປົກຄອງຢ່າງມີສິດ ແລະທຸກຄົນກໍຮັບເອົາເພິ່ນເປັນເຈົ້າຊີວິດເພື່ອປົກຄອງປະຊາກອນຂອງພຣະເຈົ້າ. ປະເທດຊາດຕ້ອງການໆຢູ່ດີເປັນປົກກະຕິເພື່ອບໍ່ໃຫ້ບ້ານເມືອງແຕກແຍກກັນ. ສົງຄາມໄດ້ເຮັດໃຫ້ທະຫານຂອງອັບຊາໂລມຕາຍຈຶ່ງເປັນເຫດໃຫ້ມີຍິງແມ່ໝ້າຍຫລາຍທີ່ສຸດ. ຕອນນີ້ປະຊາຊົນຕ້ອງການຜູ້ນໍາຄົນແຂ້ມແຂງນໍາພາ ແລະໃນທີ່ສຸດກະສັດດາວິດກໍໄດ້ເຮັດໃຫ້ໜ້າທີ່ການຮັບຜິດຊອບຂອງຕົນສໍາເລັດ.

## ບົດຊ່ວຍແນະນຳເວລາປະເຊີນກັບວິບັດ

- ອ້ອນວອນ-ສແວງຫາການນຳພາຈາກພຣະເຈົ້າ
- ອ່ານພຣະຄັມພີ-ເບິ່ງວິທີຂອງພຣະເຈົ້າ
- ປຶກສາກັບຄົນຄຣິສະຕຽນ-ຊອກຫາຄຳແນະນຳຈາກຄົນອື່ນໆ
- ໃຫ້ຈຳໄວ້-ພຣະເຈົ້າຍັງປົກຄອງສເມີໄປ

### ບົດຮຽນໃນຊີວິດ

ພັຍວິບັດນັ້ນຈະນ້ອຍຫລືໃຫຍ່ເທົ່າໃດກໍຕາມພວກເຮົາຕ້ອງປະເຊີນກັບມັນ. ບໍ່ມີປື້ມຄູ່ມືສອນເຮົາເຖິງວິທີປະເຊີນກັບພັຍວິບັດ ແຕ່ພວກເຮົາສາມາດຮຽນນຳຊີວິດຂອງຄົນອື່ນວ່າພວກເຂົາເຈົ້າໄດ້ເຮັດຢ່າງໃດເພື່ອຕໍ່ສູ້ກັບບັນຫາ. ກະສັດດາວິດເປັນຕົວຢ່າງທີ່ດີທີ່ພວກເຮົາຄວນເອົາມາປະກອບໃຊ້ໃນຊີວິດປະຈຳວັນໄດ້ເພາະເພິ່ນໄດ້ໄວ້ວາງໃຈໃນພຣະເຈົ້າທຸກໆກໍຣະນີ ແລະກໍມີຊີວິດຈົບລົງເປັນຢ່າງດີ.

ເຫັນວ່າເວລາກະສັດດາວິດໄດ້ເອົາຕົວປົບໜີອອກໄປຈາກການກະບົດຂອງລູກຊາຍ, ພຣະເຈົ້າເອງເປັນຜູ້ນຳແລະຊ່ອຍເຫລືອໃຫ້ເພິ່ນສາມາດຕໍ່ສູ້ກັບອຸປະສັກນັ້ນໄດ້ ແລະຍັງມີຊັຍຊະນະອີກ. ດາວິດໄດ້ເອົາຄົນອື່ນເປັນເພື່ອນຄືຜູ້ທີ່ເພິ່ນສາມາດອາສັຍໄດ້ແລະໄວ້ວາງໃຈໄດ້. ໃນເມື່ອພັຍວິບັດມີເພີ້ມທະວີຂຶ້ນເທົ່າໃດເພິ່ນກໍຍັງສາມາດເຮັດໃຫ້ຄວາມຮັບຜິດຂອງຂອງຕົນໃນການເປັນກະສັດນັ້ນສຳເລັດດ້ວຍການຊົງນຳພາຈາກພຣະເຈົ້າ.

ພວກເຮົາໄດ້ຮຽນຮູ້ຫຍັງແດ່ຈາກບົດຮຽນນີ້?

- ໃຫ້ພວກເຮົາຈຳໄວ້ວ່າພຣະເຈົ້າຍັງປົກຄອງສເມີໄປ- ເຖິງແມ່ນວ່າພວກເຮົາບໍ່ໄດ້ເຫັນປະຈັກຕາກໍຕາມ ພຣະອົງໄດ້ກະທຳໃຫ້ຈຸດປະສົງຂອງພຣະອົງສຳເຣັດສເມີ.
- ໃນພາວະສຸກເສີນ ພວກເຮົາຄວນເຂົ້າໃກ້ຊິດພຣະເຈົ້າຂຶ້ນ ແທນທີ່ຈະແລ່ນໜີໄປຈາກພຣະອົງ.
- ການແຍກຕົວເອງອອກຈາກຄົນອື່ນໃນເມື່ອມີຄວາມທຸກໂສກນັ້ນເປັນຂອງທັມມະດາ, ແຕ່ມັນເປັນຜົນສະທ້ອນທີ່ບໍ່ດີຕໍ່ພວກເຮົາ.
- ໃນເມື່ອພວກປະເຊີນກັບພັຍວິບັດ ພວກເຮົາບໍ່ຍອມແພ້ ບໍ່ເອົາອັນໃດມາເປັນກຳແພງບໍ່ໃຫ້ພວກເຮົາເຮັດໃຫ້ໜ້າທີ່ຄວາມຮັບຜິດຊອບຈາກພຣະເຈົ້າເສັຽໄປ.

ພັຍວິບັດເປັນໂອກາດເຮັດໃຫ້ພຣະເຈົ້າຜູ້ທີ່ເຮົາເຊື່ອຟັງນັ້ນສ່ອງແສງແຈ້ງໄປຫາຄົນອື່ນ. ເຖິງແມ່ນວ່າອັບຊາໂລມຜູ້ເປັນລູກຊາຍຂອງກະສັດດາວິດ ໃນເມື່ອລູກມີຈິດໃຈຊົ່ວຮ້າຍກະບົດຕໍ່ພໍ່ ສິ່ງທີ່ລາວເຮັດນັ້ນເປັນໂອກາດຍົກຖານະຂອງກະສັດດາວິດຂຶ້ນສູງອີກ. ເຖິງແມ່ນວ່າກະສັດດາວິດໄດ້ປົບໜີເອົາຕົວລອດໜີຈາກກຸງເຢຣູຊາເລັມ ແຕ່ເພິ່ນບໍ່ໄດ້ແລ່ນໜີຈາກບັນຫາເລີຍ. ເພິ່ນໜີໄປເພາະບໍ່ຢາກໃຫ້ເກີດການຜິດຖຽງກັບລູກ. ບາງຄັ້ງອາດເປັນການດີທີ່ຈະຕໍ່ສູ້ກັບບັນຫານັ້ນໂດຍກົງ ແລະບາງຄັ້ງຍອມໃຫ້ພຣະເຈົ້າເປັນຜູ້ກະທຳຫລືແກ້ກໍດີກວ່າ. ແຕ່ຖ້າເຮັດທັງສອງຢ່າງນີ້ໄດ້ກໍຕ້ອງເປັນຜູ້ກ້າຫານສົມຄວນ. ກະສັດດາວິດເຊື່ອຟັງພຣະເຈົ້າເຖິງແມ່ນປະເຊີນກັບພັຍວິບັດອັນໃດກໍຕາມໃນຊີວິດ. ໃຫ້ເຮົາເຮັດຢ່າງນັ້ນເໝືອນກັນ.